Paid Leave Oregon

# ຜົນປະໂຫຍດ

## ໂຄງການໃຫມ່ເຊິ່ງຈະຊ່ວຍໃຫ້ລູກຈ້າງໃນລັດອໍຣິກອນ ໄດ້ຮັບການລາພັກແບບມີຄ່າແຮງ ເມື່ອຈຳເປັນມີເຫດການສຳຄັນເກີດຂຶ້ນໃນຊີວິດເຊິ່ງຈະກະທົບເຖິງຄອບຄົວ, ສຸຂະພາບ ແລະຄວາມປອດໄພ ຂອງພວກເຮົາ.

ການລາພັກເພື່ອຄອບຄົວ - ເພື່ອດູແລຄົນໃນຄອບຄົວທີ່ເຈັບປ່ວຍຫນັກ ຫລືການບາດເຈັບ ຫລື ເພື່ອດແລເດັກເກີດໃຫມ່ພາຍຫລັງການເກີດ, ການຮັບເດັກມາລ້ຽງ ຫລື ການຈັດວາງເດັກໃນສະຖານລະດູແລເດັກ.

ການລາພັກທາງການແພດ - ໃນໄລຍະບັນຫາສຸຂະພາບທີ່ຮ້າຍແຮງຂອງຕົນເອງ.

ການລາພັກເພື່ອຄວາມປອດໄພ - ສຳລັບຜູ້ລອດພົ້ນຈາກການລ່ວງລະເມີດທາງເພດ, ຄວາມຮຸນແຮງໃນຄອບຄົວ, ການຄຸກຄາມ ຫລື ການຖືກສະກົດລອຍຕາມ.

**ຖ້າຄອບຄົວຂອງຂ້າພະເຈົ້າເຈັບປ່ວຍ ຫຼື ໄດ້ຮັບບາດເຈັບ, ຂ້າພະເຈົ້າຈະສາມາດນຳ ໃຊ້ ການລາພັກແບບໄດ້ຮັບຄ່າຈ້າງໄດ້ຫຼືບໍ່?** ໄດ້ ທ່ານໄດ້ຮັບການຄຸ້ມຄອງເພື່ອດູແລສະມາຊິກຄອບຄົວທີ່ ເຈັບປ່ວຍ ຫຼື ໄດ້ຮັບບາດເຈັບ.

**ໃຜແນ່ຖືວ່າເປັນຄອບຄົວຂອງຂ້າພະເຈົ້າພາຍໃຕ້ ໂຄງການການລາພັກແບບໄດ້ຮັບຄ່າ ຈ້າງ?** ຜູ້ທີ່ມີສາຍພົວພັນກັບທ່ານທາງສາຍເລືອດ ຫຼື ຜູ້ທີ່ມີຄວາມສຳພັນກັບທ່ານຄືກັບຄອບຄົວດຽວກັນ.

**ຂ້າພະເຈົ້າສາມາດຍື່ນຂໍຜົນປະໂຫຍດນີ້ ເມື່ອໃດ?** ເດືອນກັນຍາ ປີ 2023.

**ຂ້າພະເຈົ້າຈະໄດ້ເທົ່າໃດຈາກການລາພັກແບບໄດ້ຮັບຄ່າຈ້າງ?** 12 ອາທິດຂອງການລາພັກແບບໄດ້ຮັບຄ່າຈ້າງຕໍ່ປີ, ບວກກັບ ສອງອາທິດເພີ່ມເຕີມສຳລັບຂໍ້ຈຳກັດກ່ຽວຂ້ອງກັບການຖືພາ. ທ່ານສາມາດນຳໃຊ້ການລາພັກແບບໄດ້ຮັບຄ່າຈ້າງ ເທື່ອລະຫນຶ່ງມື້ ຫຼື ຫຼາຍມື້ຕິດຕໍ່ກັນ.

**ຂ້າພະເຈົ້າຈະໄດ້ຮັບເງິນເທົ່າໃດ?** ພະນັກງານຫຼາຍໆຄົນຈະໄດ້ຮັບການທົດແທນ 100% ຂອງຄ່າຈ້າງຂອງພວກເຂົາ.
ຈຳນວນຜົນປະໂຫຍດຂອງທ່ານຈະອີງໃສ່ຄ່າຈ້າງສະເລ່ຍຂອງທ່ານໃນປີທີ່ຜ່ານມາ.
ຜົນປະໂຫຍດຫນ້ອຍສຸດແຕ່ລະອາທິດຈະໄດ້ປະມານ $57 ແລະ
ຜົນປະໂຫຍດສູງສຸດແຕ່ລະອາທິດຈະໄດ້ປະມານ $57 ແລະ
ຜົນປະໂຫຍດສູງສຸດແຕ່ລະອາທິດຈະໄດ້ປະມານ $1375..

## ການຮັບເອົາຜົນປະໂຫຍດການລາພັກແບບໄດ້ຮັບຄ່າຈ້າງມີເງື່ອນໄຂຫຍັງແນ່?

ພະນັກງານທີ່ຍື່ນຂໍຜົນປະໂຫຍດຈາກການລາພັກແບບໄດ້ຮັບຄ່າຈ້າງຕ້ອງມີ:

- ➡ໄດ້ປະສົບກັບເຫດການທີ່ສຳຄັນໃນຊີວິດ
- ➡ປະກອບແບບຟອມຄຳຮ້ອງໃຫ້ສຳເລັດ
- ➡ມີຄ່າຈ້າງ $1000 ໃນປີທີ່ຜ່ານມາ
- ➡ໄດ້ປະກອບສ່ວນເຂົ້າໃນກອງທຶນທີ່ເຊື່ອຖືຂອງການລາພັກແບບໄດ້ຮັບຄ່າຈ້າງ ຜ່ານການຫັກອອກຈາກເງິນຄ່າຈ້າງ

## ເມື່ອໃດຂ້າພະເຈົ້າຄວນແຈ້ງນາຍຈ້າງຂອງຂ້າພະເຈົ້າຮູ້ວ່າຂ້າພະເຈົ້າມີຈຸດປະສົງຈະຂໍເອົາການລາພັກແບບມີຄ່າຈ້າງນີ້?

ຖ້າທ່ານຮູ້ວ່າທ່ານຈຳເປັນຕ້ອງລາພັກແບບໄດ້ຮັບຄ່າຈ້າງ, ທ່ານຕ້ອງແຈ້ງໃຫ້ນາຍຈ້າງຮັບຊາບເປັນລາຍລັກອັກສອນຢ່າງໜ້ອຍ 30 ວັນ ກ່ອນທີ່ທ່ານຈະລາພັກ. ຖ້າທ່ານຈຳເປັນຕ້ອງລາພັກໂດຍບໍ່ຄາດຄິດ, ທ່ານຕ້ອງແຈ້ງແບບປາກເປົ່າພາຍໃນ 24 ຊົ່ວໂມງຂອງມື້ເລີ່ມລາພັກ ແລະ ໃຫ້ແຈ້ງການເປັນລາຍລັກອັກສອນພາຍໃນເວລາສາມວັນຫຼັງຈາກເລີ່ມການລາພັກ.

## ລູກຈ້າງຄົນໃດທີ່ຈະໄດ້ຮັບການຄຸ້ມຄອງໂດຍ Paid Leave Oregon?

ລູກຈ້າງສ່ວນຫຼາຍຜູ້ທີ່ເຮັດວຽກໃນລັດ Oregon ຈະໄດ້ຮັບການຄຸ້ມຄອງໂດຍໂຄງການການລາພັກແບບໄດ້ຮັບຄ່າຈ້າງ. ຜູ້ທີ່ໄດ້ຮັບເງິນເດືອນ, ໄດ້ຮັບຄ່າຈ້າງເປັນຊົ່ວໂມງ, ເຮັດວຽກເຕັມເວລາ, ເຮັດວຽກບໍ່ເຕັມເວລາ ຫຼື ຜູ້ທີ່ເຮັດວຽກເປັນລະດູການລ້ວນແຕ່ໄດ້ຮັບການຄຸ້ມຄອງທັງໝົດ.

## ລູກຈ້າງທີ່ບໍ່ໄດ້ຮັບການຄຸ້ມຄອງໂດຍ Paid Leave Oregon?

ຜູ້ທີ່ບໍ່ໄດ້ຮັບການຄຸ້ມຄອງໂດຍການລາພັກແບບໄດ້ຮັບຄ່າຈ້າງມີຄື:

- ➡ພະນັກງານລັດຖະບານກາງ
- ➡ພະນັກງານລັດຖະບານເຜົ່າພື້ນເມືອງ
- ➡ຜູ້ທີ່ມີອາຊີບອິດສະຫຼະ ຫຼື ຮັບເຫມົາອິດສະຫຼະ
- ➡ພະນັກງານທີ່ເຮັດວຽກນອກລັດ Oregon

## ຖ້າຂ້າພະເຈົ້າບໍ່ມີຄຸນສົມບັດຄົບຖ້ວນເພື່ອໄດ້ຮັບການຄຸ້ມຄອງໂດຍ Paid Leave Oregon, ຂ້າພະເຈົ້າສາມາດເລືອກທີ່ຈະເຂົ້າຮ່ວມໂຄງການໄດ້ບໍ່?

ລັດຖະບານເຜົ່າພື້ນເມືອງ ສາມາດເລືອກທີ່ຈະເຂົ້າຮ່ວມໃນໂຄງການການລາພັກແບບໄດ້ຮັບຄ່າຈ້າງ ແລະພະນັກງານຂອງພວກເຂົາຈະໄດ້ຮັບ ການຄຸ້ມຄອງ, ຜູ້ທີ່ປະກອບອາຊີບອິດສະຫຼະ ຫຼື ຜູ້ຮັບເຫມົາອິດສະຫຼະສາມາດເລືອກທີ່ຈະເຂົ້າຮ່ວມໂຄງການໄດ້

## ໂຄງການລາພັກແບບໄດ້ຮັບຄ່າຈ້າງຂອງລັດ Oregon ແຕກຕ່າງຈາກກົດໝາຍວ່າດ້ວຍການລາພັກເພື່ອດູແລຄອບຄົວຍາມເຈັບປ່ວຍ (FMLA) ແລະ ກົດໝາຍວ່າດ້ວຍການລາພັກເພື່ອດູແລຄອບຄົວຂອງລັດອໍເຣກອນ (OFLA) ແນວໃດ?

ຢູ່ລຸ່ມນີ້ແມ່ນສະຫຼຸບຫຍໍ້ຂອງຄວາມແຕກຕ່າງບາງປະການລະຫວ່າງໂຄງການລາພັກແບບໄດ້ຮັບຄ່າຈ້າງ ກັບ FMLA/ OFLA. ແຕ່ລະໂຄງການມີກົດລະບຽບຫຼາຍປະການ ແລະ ສາມາດເປັນສິ່ງທີ່ສະຫັ◌ູບຊັບຊ້ອນໄດ້.ກະລຸນາພົວພັນຕົວແທນພະແນກບຸກຄະລາກອນຂອງທ່ານເພື່ອກຳນົດວ່າໂຄງການໃດຈະເຫມາະສົມກັບຄວາມຈຳເປັນຂອງທ່ານທີ່ສຸດ.